ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

--------------------------

ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ເລກທີ............../ກວຕ

ນະຄອນຫລວງວຽງຈັນ, ວັນທີ....................

( ຮ່າງ )

# ຂໍ້ຕົກລົງ

# ວ່າດ້ວຍ ການຄຸ້ມຄອງ ທຸລະກຳການຄ້າທາງເອເລັກໂຕຣນິກ

- ອີງຕາມ ກົດໝາຍ ວ່າດ້ວຍທຸລະກຳທາງເອເລັກໂຕຣນິກ ສະບັບເລກທີ 20/ສພຊ, ລົງວັນທີ 7 ທັນວາ 2012;
- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ສະບັບເລກທີ 309/ນຍ, ລົງວັນທີ 21 ກັນຍາ 2011.

## ລັດຖະມົນຕີ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫລັກການ, ລະບຽບການ ແລະ ມາດຕະການ ເພື່ອຄຸ້ມຄອງ, ຕິດຕາມ ແລະ ກວດກາ ທຸລະກຳການຄ້າທາງເອເລັກໂຕຣນິກ ເພື່ອສົ່ງເສີມການນຳໃຊ້ ແລະ ການບໍລິການ ໃຫ້ມີຄຸນນະພາບ, ມີປະສິດທິພາບ, ໜ້າເຊື່ອຖື, ປອດໄພ, ປົກປ້ອງຜູ້ຊົມໃຊ້, ຊັບສິນທາງປັນຍາ ແນໃສ່ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ເຊື່ອມໂຍງກັບພາກພື້ນ ແລະ ສາກົນ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງປະເທດຊາດ.

**ມາດຕາ 2 ການຄຸ້ມຄອງ ທຸລະກຳການຄ້າທາງເອເລັກໂຕຣນິກ**

ການຄຸ້ມຄອງ ທຸລະກຳການຄ້າທາງເອເລັກໂຕຣນິກ ແມ່ນ ການຕິດຕາມ, ກວດກາ ການຊື້, ການຂາຍ, ການສະໜອງ, ການແລກປ່ຽນສິນຄ້າ ຫຼື ການບໍລິການ ລະຫວ່າງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ນຳໃຊ້ເຄື່ອງມື

ທາງເອເລັກໂຕຣນິກ ເຊັ່ນ ເວັບໄຊ, ຈົດໝາຍທາງເອເລັກໂຕຣນິກ, ໂປຣແກຣມຄອມພິວເຕີ ຫຼື ແອັບພິເຄເຊິນ, ໂທລະພາບ, ໂທລະສັບ ແລະ ວິທີການອື່ນໆ.

**ມາດຕາ 3 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ເຄື່ອນໄຫວທຸລະກຳການຄ້າທາງເອເລັກໂຕຣນິກ ຢູ່ ສປປ ລາວ.

## ໝວດທີ 2
## ການຈັດຕັ້ງປະຕິບັດທຸລະກຳການຄ້າທາງເອເລັກໂຕຣນິກ

**ມາດຕາ 4 ເອກະສານທຸລະກຳການຄ້າທາງເອເລັກໂຕຣນິກ**

ເອກະສານທຸລະກຳການຄ້າທາງເອເລັກໂຕຣນິກ ແມ່ນ ສັນຍາ, ຂໍ້ຄວາມ, ຈົດໝາຍເອເລັກໂຕຣນິກ ຫຼື ເອກະສານຄັດຕິດທີ່ປະກອບໃນການນຳເຂົ້າສິນຄ້າ, ການສົ່ງອອກສິນຄ້າ ຫຼື ເອກະສານອື່ນທີ່ກ່ຽວຂ້ອງ ຈະຖືກຮັບຮູ້ ແລະ ມີຜົນສັກສິດຕາມກົດໝາຍ ກໍ່ຕໍ່ເມື່ອໄດ້ປະຕິບັດໃຫ້ຖືກຕ້ອງຕາມເງື່ອນໄຂທີ່ກຳນົດໄວ້ໃນມາດຕາ 6, ມາດຕາ 8, ມາດຕາ 9, ມາດຕາ 10, ມາດຕາ 11, ມາດຕາ 12 ແລະ ມາດຕາ 13 ຂອງ ກົດໝາຍວ່າດ້ວຍທຸລະກຳທາງເອເລັກໂຕຣນິກ.

**ມາດຕາ 5 ຂໍ້ຄວາມທາງເອເລັກໂຕຣນິກກ່ຽວກັບການຄ້າທີ່ບໍ່ພຶງປະສົງ**

ຂໍ້ຄວາມທາງເອເລັກໂຕຣນິກກ່ຽວກັບການຄ້າທີ່ບໍ່ພຶງປະສົງ ແມ່ນ ຂໍ້ຄວາມທີ່ເປັນຂໍ້ມູນ ທີ່ສົ່ງຫາຜູ້ຮັບການສື່ສານ ຈາກຜູ້ສະໜອງ ຫຼື ສື່ກາງ ເພື່ອຈຸດປະສົງທາງການຄ້າ ຫຼື ການຕະຫຼາດ ຊຶ່ງບໍ່ໄດ້ຮັບຄວາມຍິນຍອມ ຫຼື ມີການປະຕິເສດບໍ່ຕ້ອງຮັບຂໍ້ຄວາມທາງເອເລັກໂຕຣນິກນັ້ນຢ່າງຊັດເຈນຈາກ ຜູ້ຮັບການສື່ສານ.

**ມາດຕາ 6 ການຮັບປະກັນຄວາມເຊື່ອຖືໄດ້ຂອງທຸລະກຳການຄ້າທາງເອເລັກໂຕຣນິກ**

ການຮັບປະກັນຄວາມເຊື່ອຖືໄດ້ຂອງທຸລະກຳການຄ້າທາງເອເລັກໂຕຣນິກ ສະແດງອອກ ດັ່ງນີ້:

1. ນຳໃຊ້ລາຍເຊັນດີຈີຕອນທີ່ມີການປ້ອງກັນ ແລະ ໃບຢັ້ງຢືນດີຈີຕອນ;
2. ດຳເນີນທຸລະກິດສອດຄ່ອງຕາມວັດຖຸປະສົງຂອງວິສາຫະກິດ, ມີການຄວບຄຸມພາຍໃນທີ່ເປັນລະບົບ, ຈັດຕັ້ງການກວດສອບພາຍໃນ ເປັນປົກກະຕິ ຢ່າງໜ້ອຍ ປີລະ 01 ຄັ້ງ ແລະ ລາຍງານຂໍ້ມູນຂ່າວສານດັ່ງກ່າວ;
3. ກຳນົດນະໂຍບາຍ, ມາດຕະການ ແລະ ລະບຽບວິທີປະຕິບັດງານ ໃນທຸກຂອດວຽກງານ;
4. ທົບທວນຄືນ ແລະ ປະເມີນຜົນປະສິດຕິພາບ ເຄື່ອງມືທາງເອເລັກໂຕຣນິກທີ່ນຳໃຊ້ ຂອງລະບົບບໍລິການ;
5. ນຳໃຊ້, ເກັບຮັກສາ ແລະ ແລກປ່ຽນ ຂໍ້ມູນເອເລັກໂຕຣນິກ ຫຼື ເອກະສານທາງເອເລັກໂຕຣນິກ ໃນລະບົບທີ່ສອດຄ່ອງກັບມາດຕະຖານສາກົນ ແລະ ມາດຕະຖານອື່ນ ຕາມລະບຽບການ;
6. ຜ່ານການຢັ້ງຢືນຄວາມໜ້າເຊື່ອຖືຂອງວິສາຫະກິດຈາກອົງການຄຸ້ມຄອງ ແລະ ກວດກາ ທຸລະກຳການຄ້າທາງເອເລັກໂຕຣນິກ.

**ມາດຕາ 7 ການນຳໃຊ້ລາຍເຊັນດີຈິຕອນທີ່ມີການປ້ອງກັນ**

ລາຍເຊັນດີຈິຕອນທີ່ມີການປ້ອງກັນທີ່ຄູ່ຮ່ວມທຸລະກຳການຄ້າທາງເອເລັກໂຕຣນິກນຳໃຊ້ ຕ້ອງໄດ້ຮັບການຢັ້ງຢືນຈາກຜູ້ໃຫ້ບໍລິການຢັ້ງຢືນລາຍເຊັນດີຈິຕອນທີ່ມີການປ້ອງກັນ ທີ່ໄດ້ຮັບອະນຸຍາດຈາກ ຂະແໜງການວິທະຍາສາດ ແລະ ເຕັກໂນໂລຊີ ຕາມທີ່ໄດ້ກຳນົດໄວ້ໃນມາຕາ 27 ແລະ ມາດຕາ 28 ຂອງກົດໝາຍວ່າດ້ວຍທຸລະກຳທາງເອເລັກໂຕຣນິກ ຈຶ່ງຖືວ່າລາຍເຊັນດັ່ງກ່າວມີຜົນສັກສິດຕາມກົດໝາຍ.

ການນຳໃຊ້ລາຍເຊັນດີຈິຕອນທີ່ມີການປ້ອງກັນຂອງຕ່າງປະເທດ ຕ້ອງຖືກຮັບຮູ້ຈາກ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 29 ຂອງກົດໝາຍວ່າດ້ວຍທຸລະກຳທາງເອເລັກໂຕຣນິກ ຈຶ່ງຖືວ່າລາຍເຊັນດັ່ງກ່າວມີຜົນສັກສິດຕາມກົດໝາຍ.

**ມາດຕາ 8 ການຊຳລະເງິນ**

ການຊຳລະເງິນໃນການທຸລະກຳການຄ້າທາງເອເລັກໂຕຣນິກ ມີ ດັ່ງນີ້:

1. ຄູ່ຮ່ວມທຸລະກຳການຄ້າທາງເອເລັກໂຕຣນິກ ສາມາດຕົກລົງຮ່ວມກັນເລືອກນຳໃຊ້ວິທີການຊຳລະເງິນຄ່າສິນຄ້າ ຫຼື ການບໍລິການ;
2. ຖ້າເລືອກນຳໃຊ້ວິທີການຊຳເງິນລະຜ່ານລະບົບອອນລາຍ ຫຼື ບໍລິການການເງິນທາງເອເລັກໂຕຣນິກ ຕ້ອງມີມາດຕະການຄວາມປອດໄພ, ຄວາມໜ້າເຊື່ອຖື ແລະ ຄວາມລັບຂອງຂໍ້ມູນສ່ວນຕົວລູກຄ້າ;
3. ການຊຳລະເງິນຜ່ານລະບົບທະນາຄານ ຕ້ອງໄດ້ປະຕິບັດຕາມລະບຽບກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ 9 ການຂົນສົ່ງສິນຄ້າ ແລະ ການບໍລິການ**

ຄູ່ຮ່ວມທຸລະກຳການຄ້າທາງເອເລັກໂຕຣນິກ ສາມາດຕົກລົງຮ່ວມກັນເລືອກນຳໃຊ້ວິທີການຂົນສົ່ງໃດໜຶ່ງຕາມຄວາມເໝາະສົມ ດັ່ງນີ້:

1. ທາງນ້ຳ;
2. ທາງບົກ;
3. ໄປສະນີ;
4. ອິນເຕີເນັດ;
5. ປະເພດການຂົນສົ່ງອື່ນໆ.

**ມາດຕາ 10 ການປະຕິບັດລະບອບພາສີ, ອາກອນ**

ການປະຕິບັດລະບອບພາສີ, ອາກອນ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ດຳເນີນທຸລະກຳການຄ້າທາງເອເລັກໂຕຣນິກ ຕ້ອງປະຕິບັດຕາມລະບຽບກົດໝາຍທີ່ກ່ຽວຂ້ອງ.

## ໝວດທີ 3
## ການດຳເນີນທຸລະກິດດ້ານທຸລະກຳການຄ້າທາງເອເລັກໂຕຣນິກ

**ມາດຕາ 11 ຮູບແບບທຸລະກິດດ້ານທຸລະກາການຄ້າທາງເອເລັກໂຕຣນິກ**

ຮູບແບບທຸລະກິດດ້ານທຸລະກຳການຄ້າທາງເອເລັກໂຕຣນິກ ມີ ດັ່ງນີ້:

1. ທຸລະກິດທີ່ໄດ້ຂຶ້ນທະບຽນວິສາຫະກິດ;
2. ທຸລະກິດທີ່ໄດ້ຂຶ້ນທະບຽນຝາກຂາຍອອນລາຍ;
3. ທຸລະກິດທີ່ໃຫ້ບໍລິການຮັບຝາກຮ້ານຂາຍສິນຄ້າ ຫຼື ການບໍລິການອອນລາຍ.

**ມາດຕາ 12 ທຸລະກິດທີ່ໄດ້ຂຶ້ນທະບຽນວິສາຫະກິດ**

ທຸລະກິດທີ່ໄດ້ຂຶ້ນທະບຽນວິສາຫະກິດ ແມ່ນ ການດຳເນີນທຸລະກິດທີ່ໄດ້ປະຕິບັດເງື່ອນໄຂການຂຶ້ນທະບຽນວິສາຫະກິດຖືກຕ້ອງຕາມລະບຽບກົດໝາຍທີ່ກ່ຽວຂ້ອງ ແລະ ຕ້ອງໄດ້ຂໍອະນຸຍາດດຳເນີນທຸລະກິດດ້ານທຸລະກຳການຄ້າທາງເອເລັກໂຕຣນິກ ຈາກ ຂະແໜງການວິທະຍາສາດ ແລະ ເຕັກໂນໂລຊີ ບ່ອນທີ່ຕົນປະກອບກິດຈະການ.

ບຸກຄົນ ຫຼື ນິຕິບຸກຄົນ ທີ່ມີຈຸດປະສົງຂໍອະນຸຍາດດຳເນີນທຸລະກິດດ້ານທຸລະກຳການຄ້າທາງເອເລັກໂຕຣນິກ ຕ້ອງປະກອບເອກະສານຍື່ນຫາ ຂະແໜງການວິທະຍາສາດ ແລະ ເຕັກໂນໂລຊີ ໃຫ້ຄົບຖ້ວນ ດັ່ງນີ້:

1. ຄຳຮ້ອງຂໍອະນຸຍາດດຳເນີນທຸລະກິດ;
2. ໜັງສືແຈ້ງກ່ຽວກັບປະເພດການໃຫ້ບໍລິການ;
3. ໜັງສືອະທິບາຍກ່ຽວກັບເຕັກໂນໂລຊີທີ່ຈະນຳໃຊ້ໃນລະບົບໃຫ້ບໍລິການ (ຮູບແບບ, ວິທີການ, ການນຳໃຊ້ລາຍເຊັນດີຈີຕອນທີ່ມີການປ້ອງກັນ, ລະບົບການຊຳລະ, ຄວາມປອດໄພຂໍ້ມູນ, ຄວາມໜ້າເຊື່ອຖື ແລະ ຄວາມລັບຂອງຂໍ້ມູນສ່ວນຕົວລູກຄ້າ);
4. ໜັງສືອະທິບາຍກ່ຽວກັບແຜນການຄຸ້ມຄອງ, ຂັ້ນຕອນ, ລະບຽບ ແລະ ມາດຕະການທີ່ໄດ້ຮັບຮອງເອົາ (ການຄວບຄຸມພາຍໃນ, ການກວດສອບພາຍໃນ, ນະໂຍບາຍການປົກປ້ອງຜູ້ຊົມໃຊ້, ນະໂຍບາຍການຂົນສົ່ງ, ການແກ້ໄຂຂໍ້ຜິດພາດໃນການບໍລິການ, ການປົກປ້ອງຊັບສິນທາງປັນຍາ, ນະໂຍບາຍດ້ານການໂຄສະນາ);
5. ທະບຽນວິສາຫະກິດ;
6. ທະບຽນອາກອນ (ຖ້າມີ);
7. ຂໍ້ມູນອື່ນທີ່ກ່ຽວຂ້ອງ.

**ມາດຕາ 13 ທຸລະກິດທີ່ໄດ້ຂຶ້ນທະບຽນຝາກຂາຍອອນລາຍ**

ທຸລະກິດທີ່ໄດ້ຂຶ້ນທະບຽນຝາກຂາຍອອນລາຍ ແມ່ນ ການດຳເນີນທຸລະກິດຂອງບຸກຄົນ ທີ່ບໍ່ໄດ້ຂຶ້ນທະບຽນວິສາຫະກິດຖືກຕ້ອງຕາມລະບຽບກົດໝາຍ ແຕ່ຫາກມີການເຄື່ອນໄຫວທຸລະກິດດ້ານທຸລະກຳການຄ້າທາງເອເລັກໂຕຣນິກ ລ້ວນແຕ່ຕ້ອງໄດ້ຂຶ້ນທະບຽນຝາກຂາຍອອນລາຍ ນຳຜູ້ໃຫ້ບໍລິການຮັບຝາກຮ້ານຂາຍສິນຄ້າ ຫຼື ການບໍລິການອອນລາຍ ທີ່ໄດ້ຮັບອະນຸຍາດຈາກຂະແໜງການວິທະຍາສາດ ແລະ ເຕັກໂນໂລຊີ.

**ມາດຕາ 14 ທຸລະກິດທີ່ໃຫ້ບໍລິການຮັບຝາກຮ້ານຂາຍສິນຄ້າ ຫຼື ການບໍລິການອອນລາຍ**

ທຸລະກິດທີ່ໃຫ້ບໍລິການຮັບຝາກຮ້ານຂາຍສິນຄ້າ ຫຼື ການບໍລິການອອນລາຍ ແມ່ນ ມີການ ລະຫວ່າງ ຜູ້ຂາຍ ຫຼື ຜູ້ໃຫ້ບໍລິການ ກັບ ຜູ້ຊື້ ຫຼື ຜູ້ໃຊ້ບໍລິການ, ວັດຖຸປະສົງການເຄື່ອນໄຫວທຸລະກິດຂອງວິສາຫະກິດ ເພື່ອໃຫ້ເຊົ່າພື້ນທີ່, ຮັບຝາກຮ້ານອອນລາຍ ຫຼື ຂໍ້ມູນຕ່າງໆໃນຈຸດປະສົງ ການຊື້, ການຂາຍ, ການສະໜອງ, ການແລກປ່ຽນສິນຄ້າ ຫຼື ການບໍລິການ.

ບຸກຄົນ ຫຼື ນິຕິບຸກຄົນ ທີ່ມີຈຸດປະສົງຂໍອະນຸຍາດດຳເນີນທຸລະກິດໃຫ້ບໍລິການຮັບຝາກຮ້ານຂາຍສິນຄ້າ ຫຼື ການບໍລິການອອນລາຍ ຕ້ອງໄດ້ປະຕິບັດເງື່ອນໄຂການຂຶ້ນທະບຽນວິສາຫະກິດໃຫ້ຖືກຕ້ອງຕາມລະບຽບກົດໝາຍທີ່ກ່ຽວຂ້ອງ ແລະ ຕ້ອງໄດ້ຂໍອະນຸຍາດດຳເນີນທຸລະກິດຈາກຂະແໜງການວິທະຍາສາດ ແລະ ເຕັກໂນໂລຊີ ໂດຍປະກອບເອກະສານໃຫ້ຄົບຖ້ວນ ດັ່ງນີ້:

1. ຄຳຮ້ອງຂໍອະນຸຍາດດຳເນີນທຸລະກິດ;
2. ໜັງສືແຈ້ງກ່ຽວກັບປະເພດສິນຄ້າ ແລະ ບໍລິການທີ່ຈະໃຫ້ບໍລິການຮັບຝາກ;
3. ໜັງສືອະທິບາຍກ່ຽວກັບເຕັກໂນໂລຊີທີ່ຈະນຳໃຊ້ໃນລະບົບໃຫ້ບໍລິການ (ຮູບແບບ, ວິທີການ, ການນຳໃຊ້ລາຍເຊັນດິຈິຕອນທີ່ມີການປ້ອງກັນ, ລະບົບການຊຳລະ, ຄວາມປອດໄພຂໍ້ມູນ, ຄວາມໜ້າເຊື່ອຖື ແລະ ຄວາມລັບຂອງຂໍ້ມູນສ່ວນຕົວລູກຄ້າ, ລະບົບການຢັ້ງຢືນຜູ້ຂຶ້ນທະບຽນຝາກຂາຍອອນລາຍ);
4. ໜັງສືອະທິບາຍກ່ຽວກັບແຜນການຄຸ້ມຄອງ, ຂັ້ນຕອນ, ລະບຽບ ແລະ ມາດຕະການທີ່ໄດ້ຮັບຮອງເອົາ (ການຄວບຄຸມພາຍໃນ, ການກວດສອບພາຍໃນ, ນະໂຍບາຍການປົກປ້ອງຜູ້ຊົມໃຊ້, ນະໂຍບາຍການຂົນສົ່ງ, ການແກ້ໄຂຂໍ້ຜິດພາດໃນການບໍລິການ, ການປົກປ້ອງຊັບສິນທາງປັນຍາ, ນະໂຍບາຍດ້ານການໂຄສະນາ);
5. ທະບຽນວິສາຫະກິດ;
6. ທະບຽນອາກອນ (ຖ້າມີ);
7. ຂໍ້ມູນອື່ນທີ່ກ່ຽວກັບການຄຸ້ມຄອງຮ້ານຂາຍສິນຄ້າ ຫຼື ການບໍລິການອອນລາຍຢູ່ໃນລະບົບຕົນ.

**ມາດຕາ 15 ເງື່ອນໄຂການພິຈາລະນາອອກໃບອະນຸຍາດດຳເນີນທຸລະກິດ**

ເງື່ອນໄຂການພິຈາລະນາອອກໃບອະນຸຍາດດຳເນີນທຸລະກິດດ້ານທຸລະກຳການຄ້າທາງເອເລັກໂຕຣນິກ ມີ ດັ່ງນີ້:

1. ມີວິຊາການກ່ຽວຂ້ອງກັບປະເພດບໍລິການ;
2. ບໍ່ມີປະຫວັດສໍ້ໂກງ, ຢູ່ໃນຂະບວນການລົ້ມລະລາຍ, ຢູ່ໃນຊ່ວງຖືກອາຍັດຊັບ ຫຼື ຖືກສານຕັດສິນເປັນຜູ້ກໍາທໍາຜິດໃນຄະດີທີ່ມີລັກສະນະຄ້າຍຄືກັນ;
3. ມີເງິນຄໍ້າປະກັນຢູ່ທະນາຄານ ຢ່າງໜ້ອຍ 70 ສ່ວນຮ້ອຍ (70%) ຂອງທຶນຈົດທະບຽນ;
4. ຕ້ອງປະກອບເອກະສານໃຫ້ຄົບຖ້ວນຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້.

**ມາດຕາ 16 ການພິຈາລະນາອອກໃບອະນຸຍາດດຳເນີນທຸລະກິດ**

ການພິຈາລະນາອອກໃບອະນຸຍາດດຳເນີນທຸລະກິດດ້ານທຸລະກຳການຄ້າທາງເອເລັກໂຕຣນິກ ມີ ດັ່ງນີ້:

1. ພາຍຫຼັງຮັບຄຳຮ້ອງ ພະນັກງານຮັບຄາຮ້ອງ ຕ້ອງໄດ້ກວດກາເອກະສານເບື້ອງຕົ້ນ ພ້ອມທັງຢັ້ງຢືນຄວາມຄົບຖ້ວນຂອງເອກະສານ ແລ້ວສົ່ງໄປຫາໜ່ວຍງານກ່ຽວຂ້ອງ. ໃນກໍລະນີກວດພົບວ່າ ເອກະສານຄຳຮ້ອງຫາກບໍ່ຄົບຖ້ວນ ພະນັກງານຮັບຄຳຮ້ອງ ຕ້ອງແຈ້ງໃຫ້ຜູ້ຍື່ນຄຳຮ້ອງຮັບຊາບ ແລະ ມາຮັບເອົາເອກະສານຄຳຮ້ອງດັ່ງກ່າວໄປປັບປຸງຄືນໃໝ່;
2. ໜ່ວຍງານກ່ຽວຂ້ອງ ຕ້ອງຄົ້ນຄວ້າ, ພິຈາລະນາ ອອກໃບອະນຸຍາດດຳເນີນທຸລະກິດດ້ານທຸລະກຳການຄ້າທາງເອເລັກໂຕຣນິກ ໃຫ້ສຳເລັດພາຍໃນກຳນົດເວລາ 10 ວັນ ລັດຖະການ ນັບແຕ່ວັນໄດ້ຮັບຄາຮ້ອງເປັນຕົ້ນໄປ. ໃນກໍລະນີປະຕິເສດການຮ້ອງຂໍອະນຸຍາດດຳເນີນທຸລະກິດ ທີ່ປະກອບເອກະສານບໍ່ຖືກຕ້ອງ, ບໍ່ມີເງື່ອນໄຂໄດ້ຮັບອະນຸຍາດ ຫຼື ມີການເຄື່ອນໄຫວບໍ່ສອດຄ່ອງຕາມລະບຽບກົດໝາຍ ໜ່ວຍງານທີ່ກ່ຽວຂ້ອງ ຕ້ອງແຈ້ງຄຳຕອບແກ່ຜູ້ຍື່ນຄຳຮ້ອງຮັບຊາບເປັນລາຍລັກອັກສອນ;
3. ຜູ້ຍື່ນຄຳຮ້ອງ ຕ້ອງມີການສາທິດ ຫຼື ນຳສະເໜີກ່ຽວກັບລະບົບບໍລິການ, ສິ່ງອຳນວຍຄວາມສະດວກ ແລະ ອຸປະກອນຕ່າງໆທີ່ນຳໃຊ້ເຂົ້າໃນລະບົບການບໍລິການຂອງຕົນ ແກ່ໜ່ວຍງານຮັບຜິດຊອບຊາບ ກ່ອນການພິຈາລະນາອອກໃບອະນຸຍາດ;
4. ກຳນົດເວລານຳໃຊ້ໃບອະນຸຍາດ ແມ່ນ 3 ປີ ນັບແຕ່ມື້ໄດ້ຮັບການອະນຸຍາດເປັນຕົ້ນໄປ. ຖ້າຜູ້ໄດ້ຮັບອະນຸຍາດຫາກຕ້ອງການສືບຕໍ່ດຳເນີນທຸລະກິດດ້ານດັ່ງກ່າວ ສາມາດຍື່ນຄຳຮ້ອງຂໍອະນຸຍາດສືບຕໍ່ດຳເນີນທຸລະກິດ;
5. ໃບອະນຸຍາດດຳເນີນທຸລະກິດ ຕ້ອງນຳໃຊ້ໃນຂອບເຂດທີ່ກຳນົດໃນໃບອະນຸຍາດເທົ່ານັ້ນ.

**ມາດຕາ 17 ການຂໍອະນຸຍາດສືບຕໍ່ດຳເນີນທຸລະກິດ**

ການຂໍອະນຸຍາດສືບຕໍ່ດຳເນີນທຸລະກິດດ້ານທຸລະກຳການຄ້າທາງເອເລັກໂຕຣນິກ ມີ ດັ່ງນີ້:

1. ຜູ້ດຳເນີນທຸລະກິດ ທີ່ມີຈຸດປະສົງຢາກສືບຕໍ່ດຳເນີນທຸລະກິດດ້ານທຸລະກຳການຄ້າທາງເອເລັກໂຕຣນິກ ສາມາດຍື່ນຄຳຮ້ອງຂໍອະນຸຍາດສືບຕໍ່ ກ່ອນໝົດກຳນົດເວລານຳໃຊ້ໃບອະນຸຍາດ ຢ່າງໜ້ອຍ 30 ວັນ;
2. ໃນກໍລະນີທີ່ໃບອະນຸຍາດ ຫາກໄດ້ໝົດກຳນົດເວລານຳໃຊ້ພາຍໃນ 30 ວັນ ຜູ້ດຳເນີນທຸລະກິດ ຕ້ອງເຂົ້າມາພົວພັນນຳຂະແໜງການວິທະຍາສາດ ແລະ ເຕັກໂນໂລຊີ ຢ່າງຮີບດ່ວນ ເພື່ອຂໍອະນູຍາດສືບຕໍ່ດຳເນີນທຸລະກິດ ພ້ອມທັງໃຫ້ເຫດຜົນກ່ຽວກັບຄວາມລ້າຊ້າ ແລະ ເສຍຄ່າປັບໃໝຕາມລະບຽບການ;
3. ໜ່ວຍງານກ່ຽວຂ້ອງ ຕ້ອງໃຊ້ເວລາພິຈາລະນາໃຫ້ສຳເລັດພາຍໃນ 5 ວັນ ລັດຖະການ.

ການປະກອບເອກະສານຂໍອະນຸຍາດສືບຕໍ່ດຳເນີນທຸລະກິດດ້ານທຸລະກຳການຄ້າທາງເອເລັກໂຕຣນິກ ມີ ດັ່ງນີ້:

1. ຄຳຮ້ອງຂໍອະນຸຍາດສືບຕໍ່ດຳເນີນທຸລະກິດ;
2. ໜັງສືຢັ້ງຢືນການກວດກາບົດລາຍງານປະຈຳປີກ່ຽວກັບການດຳເນີນທຸລະກິດຂອງວິສາຫະກິດ ຂອງອົງການຄຸ້ມຄອງ ແລະ ກວດກາ (ລະບົບບໍລິຫານ, ລາຍຮັບປະຈຳປີ, ການເຄື່ອນໄຫວດຳເນີນທຸລະກິດ);
3. ສຳເນົາໃບອະນຸຍາດດຳເນີນທຸລະກິດດ້ານທຸລະກຳການຄ້າທາງເອເລັກໂຕຣນິກ (ສະບັບຫຼ້າສຸດ);
4. ຂໍ້ມູນອື່ນເພີ່ມຕື່ມ (ຖ້າມີການເພີ່ມປະເພດການໃຫ້ບໍລິການ ຫຼື ເພີ່ມປະເພດສິນຄ້າ ແລະ ບໍລິການທີ່ຈະໃຫ້ບໍລິການຮັບຝາກ, ປ່ຽນແປງຂໍ້ມູນ, ອື່ນໆ)

**ມາດຕາ 18 ການຂໍປ່ຽນແປງຂໍ້ມູນ**

ບຸກຄົນ ຫຼື ນິຕິບຸກຄົນ ທີ່ມີຈຸດປະສົງຂໍປ່ຽນແປງຂໍ້ມູນທີ່ກ່ຽວຂ້ອງກັບການດໍາເນີນທຸລະກິດດ້ານທຸລະກໍາການຄ້າທາງເອເລັກໂຕຣນິກ ຕ້ອງປະກອບເອກະສານເພື່ອຊີ້ແຈ້ງເຫດຜົນ.

**ມາດຕາ 19 ການໂຈະການດໍາເນີນທຸລະກິດ**

ການໂຈະການດໍາເນີນທຸລະກິດດ້ານທຸລະກໍາການຄ້າທາງເອເລັກໂຕຣນິກ ແມ່ນ ໃນກໍລະນີ ດັ່ງນີ້:

1. ບໍ່ຂໍຕໍ່ໃບອະນຸຍາດດໍາເນີນທຸລະກິດ ເມື່ອໃບອະນຸຍາດຫາກໄດ້ໝົດກໍານົດເວລານໍາໃຊ້ພາຍໃນ 60 ວັນ;
2. ບໍລິການເກີນປະເພດທີ່ໄດ້ຮັບອະນຸຍາດ, ບໍ່ສອດຄ່ອງກັບວັດຖຸປະສົງ ຫຼື ຂໍ້ມູນທີ່ແຈ້ງໃນການຂໍອະນຸຍາດດໍາເນີນທຸລະກິດເບື້ອງຕົ້ນ;
3. ປອມແປງ, ບິດເບືອນ, ປົກປິດ, ເຊື່ອງອໍາ ຫຼື ສະໜອງຂໍ້ມູນທີ່ບໍ່ຖືກຕ້ອງຕາມການກໍານົດຂອງອົງການຄຸ້ມຄອງ ແລະ ກວດກາ;
4. ບໍ່ລາຍງານກ່ຽວກັບການດໍາເນີນທຸລະກິດຂອງຕົນໃຫ້ແກ່ອົງການຄຸ້ມຄອງ ແລະ ກວດກາ ຊາບຢ່າງເປັນປົກກະຕິ;
5. ຂໍໂຈະການດໍາເນີນທຸລະກິດ ເພື່ອປັບປຸງລະບົບຄວບຄຸມພາຍໃນ;
6. ບໍ່ຊໍາລະຄ່າທໍານຽມ, ຄ່າບໍລິການ ຫຼື ອາກອນໃຫ້ລັດຕາມລະບຽບການ;
7. ລະເມີດກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ.

**ມາດຕາ 20 ການຖອນໃບອະນຸຍາດດໍາເນີນທຸລະກິດ**

ການຖອນໃບອະນຸຍາດດໍາເນີນທຸລະກິດດ້ານທຸລະກໍາການຄ້າທາງເອເລັກໂຕຣນິກ ແມ່ນ ໃນກໍລະນີ ດັ່ງນີ້:

1. ຂໍຍຸບເລີກ;
2. ນໍາໃບອະນຸຍາດໃຫ້ຜູ້ອື່ນນໍາໃຊ້, ເຊົ່າ ຫຼື ໂອນ ໂດຍບໍ່ໄດ້ຮັບອະນຸຍາດຈາກຂະແໜງວິທະຍາສາດ ແລະ ເຕັກໂນໂລຊີ;
3. ຖືກໂຈະໃບອະນຸຍາດແລ້ວ ບໍ່ປະຕິບັດຕາມອົງການຄຸ້ມຄອງ ແລະ ກວດກາແຈ້ງການ ພາຍໃນໄລຍະເວລາ 90 ວັນ;
4. ລະເມີດກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ.

**ມາດຕາ 21 ຄ່າທໍານຽມ ແລະ ຄ່າບໍລິການ**

ຄ່າທໍານຽມ ແລະ ຄ່າບໍລິການ ໃນການຂໍອະນຸຍາດດໍາເນີນທຸລະກິດ ແມ່ນໃຫ້ປະຕິບັດຕາມທີ່ໄດ້ກໍານົດໄວ້ໃນລະບຽບການສະເພາະ ກ່ຽວກັບຄ່າທໍານຽມ ແລະ ຄ່າບໍລິການທີ່ປະກາດໃຊ້ໃນແຕ່ລະໄລຍະ.

## ໝວດທີ 4
## ສິດ ແລະ ພັນທະ

### ມາດຕາ 22 ສິດ ແລະ ພັນທະ ຂອງຜູ້ດຳເນີນທຸລະກິດ

ຜູ້ດຳເນີນທຸລະກິດດ້ານທຸລະກຳການຄ້າທາງເອເລັກໂຕຣນິກ ມີ ສິດ ແລະ ພັນທະ ດັ່ງນີ້:

1. ປົກປ້ອງສິດ ແລະ ຜົນປະໂຫຍດໃນການໃຫ້ບໍລິການຂອງຕົນ;
2. ໃຫ້ບໍລິການຕາມປະເພດທີ່ຕົນໄດ້ຮັບອະນຸຍາດ;
3. ສະເໜີຂໍອະນຸຍາດສືບຕໍ່ດຳເນີນທຸລະກິດ, ສຳເນົາໃບອະນຸຍາດ, ປ່ຽນແປງຂໍ້ມູນ, ໂຈະ ຫຼື ຍຸບເລີກການດຳເນີນທຸລະກິດຂອງຕົນ;
4. ຈຳໜ່າຍ, ສະໜອງ ຫຼື ການບໍລິການ ສິນຄ້າ ຫຼື ຜະລິດຕະພັນ ທີ່ບໍ່ລະເມີດສິດຕໍ່ຊັບສິນທາງປັນຍາ;
5. ຮັບຜິດຊອບຕໍ່ສິນຄ້າ, ຜະລິດຕະພັນ ຫຼື ການບໍລິການ ທີ່ບໍ່ມີຄຸນນະພາບ, ຊຳລຸດ, ເປ່ເພ, ເສຍຫາຍ, ເກືອດຫ້າມ ຫຼື ລະເມີດລະບຽບກົດໝາຍຂອງ ສປປ ລາວ ທີ່ກຳນົດໄວ້;
6. ຮັບປະກັນໃຫ້ລະບົບການບໍລິການມີຄຸນນະພາບ, ຮັກສາຂໍ້ມູນສ່ວນຕົວຂອງຜູ້ຊົມໃຊ້, ມີຄວາມປອດໄພ, ຄວາມໜ້າເຊື່ອຖື ແລະ ມີການກວດກາພາຍໃນເປັນປົກກະຕິ;
7. ມີລະບົບຮອງຮັບໃນການແຈ້ງຂໍ້ມູນ ຫຼື ຄຳສະເໜີຈາກຜູ້ຊົມໃຊ້, ມາດຕະການແກ້ໄຂຂໍ້ຜິດພາດ ຫຼື ຂໍ້ຂັດແຍ່ງໃນການບໍລິການຂອງຕົນ ທີ່ບໍ່ມີຜົນກະທົບຕໍ່ຜູ້ຊົມໃຊ້ ຫຼື ຕໍ່ຜູ້ອື່ນ;
8. ໃຫ້ການຮ່ວມມື, ລາຍງານການດຳເນີນທຸລະກິດປະຈຳປີຂອງຕົນ ໃຫ້ແກ່ອົງການຄຸ້ມຄອງ ແລະ ກວດກາຊາບ ຢ່າງເປັນປົກກະຕິ;
9. ນຳໃຊ້ສິດ ແລະ ປະຕິບັດພັນທະອື່ນຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

### ມາດຕາ 23 ສິດ ແລະ ພັນທະ ຂອງຜູ້ໃຊ້ບໍລິການ

ຜູ້ໃຊ້ບໍລິການດ້ານທຸລະກຳການຄ້າທາງເອເລັກໂຕຣນິກ ມີ ສິດ ແລະ ພັນທະ ດັ່ງນີ້:

1. ໄດ້ຮັບການບໍລິການ, ສິນຄ້າ ຫຼື ຜະລິດຕະພັນ ທີ່ມີຄຸນນະພາບ;
2. ສະເໜີຕໍ່ອົງການຄຸ້ມຄອງ ແລະ ກວດກາ ທຸລະກຳການຄ້າທາງເອເລັກໂຕຣນິກ ກ່ຽວກັບຄຸນນະພາບການສະໜອງ ຫຼື ການບໍລິການ, ການດຳເນີນທຸລະກິດທີ່ບໍ່ເປັນທຳຕໍ່ຜູ້ຊົມໃຊ້;
3. ຈ່າຍຄ່າບໍລິການ, ພາສີ, ອາກອນຕາມລະບຽບການ;
4. ຮັບຜິດຊອບຕໍ່ສິນຄ້າ ຫຼື ການບໍລິການ ທີ່ຕົນຮັບຮູ້ ແລະ ໄດ້ຕົກລົງຮັບເອົາ ຊຶ່ງຮູ້ຂໍ້ມູນຈະແຈ້ງກ່ຽວກັບສິນຄ້າ ຫຼື ການບໍລິການນັ້ນ;
5. ນຳໃຊ້ສິດ ແລະ ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

## ໝວດທີ 5
## ຂໍ້ຫ້າມ

### ມາດຕາ 24 ຂໍ້ຫ້າມທົ່ວໄປ

ຫ້າມ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີ ພຶດຕິກຳ ດັ່ງນີ້:

1. ດຳເນີນທຸລະກິດດ້ານທຸລະກຳການຄ້າທາງເອເລັກໂຕຣນິກໂດຍບໍ່ໄດ້ຮັບອະນຸຍາດຈາກ ຂະແໜງການວິທະຍາສາດ ແລະ ເຕັກໂນໂລຊີ;
2. ສົມຮູ້ຮ່ວມຄິດ, ຮ່ວມມື, ສ້າງເງື່ອນໄຂ ຫຼື ອຳນວຍຄວາມສະດວກໃຫ້ແກ່ບຸກຄົນ, ນິຕິບຸກຄົນໃດໜຶ່ງ ໃນການລະເມີດຂໍ້ຫ້າມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້;
3. ແນະນຳ, ປົກປິດ, ປົກປ້ອງ ແລະ ຊຸກຍູ້ການກະທຳຜິດທີ່ລະເມີດລະບຽບກົດໝາຍ;
4. ກີດກັ້ນ, ຂັດຂວາງ, ແຊກແຊງ ແລະ ເປີດເຜີຍຂໍ້ມູນທີ່ເປັນຄວາມລັບ ທີ່ຕົນຮູ້;
5. ປະຕິເສດ ບໍ່ສະໜອງຂໍ້ມູນ, ບໍ່ໃຫ້ການຮ່ວມມື ແກ່ການຈັດຕັ້ງກ່ຽວຂ້ອງ ຫຼື ພະນັກງານຄຸ້ມຄອງ ແລະ ກວດກາ ກ່ຽວກັບການກະທຳຜິດທີ່ພົວພັນກັບທຸລະກຳການຄ້າທາງເອເລັກໂຕຣນິກ;
6. ໃຫ້ ຫຼື ຮັບສິນບົນ, ບິດເບືອນ, ປອມແປງເອກະສານ ເພື່ອຫາຜົນປະໂຫຍດສ່ວນຕົວ ຫຼື ສ້າງຄວາມເສັຍຫາຍແກ່ຜົນປະໂຫຍດລັດ ແລະ ສັງຄົມ;
7. ມີພຶດຕິກຳອື່ນ ທີ່ລະເປັນການລະເມີດລະບຽບກົດໝາຍ.

**ມາດຕາ 25 ຂໍ້ຫ້າມ ສຳລັບພະນັກງານຄຸ້ມຄອງ ແລະ ກວດກາ**

ຫ້າມ ພະນັກງານຄຸ້ມຄອງ ແລະ ກວດກາ ທຸລະກຳການຄ້າທາງເອເລັກໂຕຣນິກ ມີ ພຶດຕິກຳ ດັ່ງນີ້:

1. ສວຍໃຊ້ໜ້າທີ່ຕຳແໜ່ງເພື່ອຫາຜົນປະໂຫຍດໃສ່ຕົວ;
2. ສົມຮູ້ຮ່ວມຄິດກັບຜູ້ດຳເນີນທຸລະກິດ ໃນການບິດເບືອນ, ປອມແປງເອກະສານ, ທຳລາຍ, ເຊື່ອງອຳຂໍ້ມູນ ແລະ ສ້າງຄວາມເສັຍຫາຍແກ່ຜົນປະໂຫຍດຂອງ ລັດ, ລວມໝູ່ ແລະ ສັງຄົມ;
3. ແນະນຳ, ປົກປິດ ແລະ ປົກປ້ອງ ບຸກຄົນ ຫຼື ນິຕິບຸກຄົນທີ່ລະເມີດລະບຽບກົດໝາຍ;
4. ກົດໜ່ວງ, ຖ່ວງດຶງ, ປະລະໜ້າທີ່ ແລະ ຄວາມຮັບຜິດຊອບຕໍ່ວຽກງານທີ່ໄດ້ຮັບມອບໝາຍ;
5. ເປີດເຜີຍຂໍ້ມູນທີ່ເປັນຄວາມລັບຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຕົນຮູ້;
6. ທວງເອົາ, ຂໍເອົາ, ຮັບສິນບົນ ຫຼື ສິ່ງຕອບແທນອື່ນ;
7. ມີພຶດຕິກຳອື່ນ ທີ່ລະເປັນການລະເມີດລະບຽບກົດໝາຍ.

**ມາດຕາ 26 ຂໍ້ຫ້າມ ສຳລັບຜູ້ດຳເນີນທຸລະກິດ**

ຫ້າມ ຜູ້ດຳເນີນທຸລະກິດດ້ານທຸລະກຳການຄ້າທາງເອເລັກໂຕຣນິກ ມີ ພຶດຕິກຳ ດັ່ງນີ້:

1. ສະໜອງຂໍ້ມູນ ບໍ່ຄົບຖ້ວນ, ບໍ່ຖືກຕ້ອງກັບຄວາມເປັນຈິງ, ທຳລາຍຂໍ້ມູນຫຼັກຖານ, ປອມແປງເອກະສານ, ເຊື່ອງອຳປົດບັງຂໍ້ມູນ ແລະ ປົກປິດການກະທຳຜິດທີ່ຕິດພັນກັບທຸລະກຳການຄ້າທາງເອເລັກໂຕຣນິກ;
2. ນຳໃບອະນຸຍາດໃຫ້ຄົນອື່ນນຳໃຊ້, ເຊົ່າ, ໂອນ ຫຼື ໃຫ້ບໍລິການນອກເໜືອຈາກປະເພດບໍລິການທີ່ຕົນໄດ້ຮັບອະນຸຍາດ;
3. ຈຳໜ່າຍ, ສະໜອງ ຫຼື ການບໍລິການ ສິນຄ້າປອມ, ເກືອດຫ້າມ, ເປັນອັນຕະລາຍຕໍ່ຊີວິດ ແລະ ສຸຂະພາບ, ລະເມີດສິດຕໍ່ຊັບສິນທາງປັນຍາ ຫຼື ລະເມີດລະບຽບກົດໝາຍ;
4. ສ້າງເອກະສານລາຍງານ ບໍ່ຄົບຖ້ວນ, ບໍ່ຖືກຕ້ອງກັບຄວາມເປັນຈິງ, ລາຍງານລ້າຊ້າ ຫຼື ບໍ່ລາຍງານ;
5. ຂັດຂວາງ, ບໍ່ໃຫ້ການຮ່ວມມື, ໃຫ້ສິນບົນ ແລະ ຄ່າຈ້າງລາງວັນ ແກ່ພະນັກງານຄຸ້ມຄອງ ແລະ ກວດກາ ຫຼື ເຈົ້າໜ້າທີ່ຂອງລັດ;

6. ໃຫ້ບໍລິການ ເພື່ອຈຸດປະສົງທີ່ບໍ່ຖືກຕ້ອງ, ເພື່ອສໍ້ໂກງ ຫຼື ໃນທາງອື່ນທີ່ບໍ່ຖືກຕ້ອງຕາມກົດໝາຍ;
7. ໂຄສະນາໃສ່ຮ້າຍປ້າຍສີ ຫຼື ສ້າງຄວາມເສຍຫາຍໃຫ້ຜູ້ບໍລິການອື່ນ;
8. ມີພຶດຕິກຳອື່ນ ທີ່ເປັນການລະເມີດລະບຽບກົດໝາຍ.

## ໝວດທີ 6
## ການຄຸ້ມຄອງ ແລະ ການກວດກາ

### ມາດຕາ 27 ອົງການຄຸ້ມຄອງ ແລະ ກວດກາ

ອົງການຄຸ້ມຄອງ ແລະ ກວດກາການທຸລະກຳການຄ້າທາງເອເລັກໂຕຣນິກ ແມ່ນ ຂະແໜງການວິທະຍາສາດ ແລະ ເຕັກໂນໂລຊີ ໂດຍປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ.

### ມາດຕາ 28 ສິດ ແລະ ໜ້າທີ່ຂອງກະຊວງວິທະຍາສາດ ແລະ ເຕັກໂນໂລຊີ

ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ພິຈາລະນາ ອອກ, ຕໍ່, ປ່ຽນແປງ, ສຳເນົາ, ໂຈະ ແລະ ຖອນໃບອະນຸຍາດດຳເນີນທຸລະກິດ;
2. ກວດສອບ ແລະ ຢັ້ງຢືນຄວາມໜ້າເຊື່ອຖືໄດ້ ຂອງຜູ້ດຳເນີນທຸລະກິດ;
3. ຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້;
4. ໂຄສະນາ, ເຜີຍແຜ່ ຂໍ້ຕົກລົງສະບັບນີ້ໃຫ້ແກ່ສັງຄົມ;
5. ກ່າວເຕືອນ, ສຶກສາອົບຮົມ ຫຼື ປັບໄໝ ຕໍ່ບຸກຄົນ ແລະ ນິຕິບຸກຄົນ ທີ່ລະເມີດຂໍ້ຕົກລົງສະບັບນີ້ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ;
6. ພິຈະລະນາ ແລະ ແກ້ໄຂ ຄຳສະເໜີກ່ຽວກັບການອະນຸຍາດດຳເນີນທຸລະກິດດ້ານທຸລະກຳການຄ້າທາງເອເລັກໂຕຣນິກ;
7. ເກັບຄ່າທຳນຽມ, ຄ່າບໍລິການ ແລະ ຄ່າອື່ນໆ ຕາມລະບຽບກົດໝາຍກຳນົດໄວ້;
8. ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນກ່ຽວກັບການປະຕິບັດວຽກງານທຸລະກຳການຄ້າທາງເອເລັກໂຕຣນິກ;
9. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

### ມາດຕາ 29 ສິດ ແລະ ໜ້າທີ່ຂອງພະແນກວິທະຍາສາດ ແລະ ເຕັກໂນໂລຊີ ແຂວງ, ນະຄອນ

ພະແນກວິທະຍາສາດ ແລະ ເຕັກໂນໂລຊີ ແຂວງ, ນະຄອນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ພິຈາລະນາ ອອກ, ຕໍ່, ປ່ຽນແປງ, ສຳເນົາ, ໂຈະ ແລະ ຖອນໃບອະນຸຍາດດຳເນີນທຸລະກິດ ຕາມກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ກຳນົດໃຫ້;
2. ຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້;
3. ໂຄສະນາ, ເຜີຍແຜ່ ຂໍ້ຕົກລົງສະບັບນີ້ ພາຍໃນທ້ອງຖິ່ນຕົນ;
4. ກ່າວເຕືອນ, ສຶກສາອົບຮົມ ຫຼື ປັບໄໝ ຕໍ່ບຸກຄົນ ແລະ ນິຕິບຸກຄົນ ທີ່ລະເມີດຂໍ້ຕົກລົງສະບັບນີ້;
5. ເກັບຄ່າທຳນຽມ, ຄ່າບໍລິການ ແລະ ຄ່າອື່ນໆ ຕາມລະບຽບກົດໝາຍກຳນົດໄວ້;

6. ສະຫຼຸບ ແລະ ລາຍງານວຽກງານກ່ຽວກັບທຸລະກຳການຄ້າທາງເອເລັກໂຕຣນິກ ຕໍ່ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ຢ່າງເປັນປົກກະຕິ;
7. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 30 ພະນັກງານຄຸ້ມຄອງ ແລະ ກວດກາ**

ພະນັກງານຄຸ້ມຄອງ ແລະ ກວດກາ ແມ່ນ ພະນັກງານ ຂອງກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ຫຼື ພະແນກວິທະຍາສາດ ແລະ ເຕັກໂນໂລຊີ ແຂວງ, ນະຄອນ ທີ່ຖືກແຕ່ງຕັ້ງໃຫ້ເຄື່ອນໄຫວ ແລະ ປະຕິບັດໜ້າທີ່ ໃນການກວດກາວຽກງານທຸລະກຳການຄ້າທາງເອເລັກໂຕຣນິກ.

**ມາດຕາ 31 ສິດ ແລະ ໜ້າທີ່ຂອງພະນັກງານຄຸ້ມຄອງ ແລະ ກວດກາ**

ພະນັກງານຄຸ້ມຄອງ ແລະ ກວດກາ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຊຸກຍູ້, ຕິດຕາມ, ກວດກາ ການປະຕິບັດວຽກງານທຸລະກຳການຄ້າທາງເອເລັກໂຕຣນິກ ແລະ ຜູ້ດຳເນີນທຸລະກິດ;
2. ກວດສອບຄວາມໜ້າເຊື່ອຖືໄດ້ຂອງຜູ້ດຳເນີນທຸລະກິດດ້ານທຸລະກຳການຄ້າທາງເອເລັກໂຕຣນິກ;
3. ພົວພັນ, ທວງໃຫ້ ບຸກຄົນ ຫຼື ນິຕິບຸກຄົນ ທີ່ດຳເນີນທຸລະກິດ ສິ່ງເອກະສານ, ຂໍ້ມູນ ແລະ ລາຍງານປະຈຳປີ;
4. ກວດກາຄວາມຖືກຕ້ອງ ໃນການດຳເນີນທຸລະກິດ ແລະ ການປະຕິບັດພັນທະ;
5. ໄດ້ຮັບການຮ່ວມມື ແລະ ອຳນວຍຄວາມສະດວກຈາກບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທຸກພາກສ່ວນ ໃນເວລາປະຕິບັດໜ້າທີ່;
6. ສະຫຼຸບ, ລາຍງານ ຜົນການກວດກາ, ນຳສະເໜີມາດຕະການແກ້ໄຂຕໍ່ການຈັດຕັ້ງຂອງຕົນ ເພື່ອພິຈາລະນາ;
7. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ ແລະ ຕາມການມອບໝາຍ.

**ມາດຕາ 32 ການຮັກສາຄວາມລັບ**

ໃນການເຄື່ອນໄຫວ ແລະ ປະຕິບັດໜ້າທີ່ຂອງຕົນນັ້ນ ພະນັກງານຄຸ້ມຄອງ ແລະ ກວດກາ ຕ້ອງຮັກສາຄວາມລັບທາງລັດຖະການກ່ຽວກັບທຸລະກຳການຄ້າທາງເອເລັກໂຕຣນິກ ຢ່າງເຂັ້ມງວດ.

## ໝວດທີ 7
## ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 33 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນທາງແພ່ງ ຫຼື ລົງໂທດທາງອາຍາຕາມແຕ່ກໍລະນີເບົາ ຫຼື ໜັກທີ່ຕົນໄດ້ກໍ່ຂຶ້ນ.

**ມາດຕາ 34 ມາດຕະການສຶກສາອົບຮົມ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຂໍ້ຕົກລົງສະບັບນີ້ ເປັນຄັ້ງທຳອິດ ໂດຍບໍ່ເຈດຕະນາ ແລະ ຄວາມເສຍຫາຍຈາກການລະເມີດທີ່ໄດ້ກໍ່ຂຶ້ນ ມີມູນຄ່າຕໍ່າກວ່າ 500,000 ກີບ ຈະຖືກສຶກສາອົບຮົມ ຫຼື ກ່າວເຕືອນ.

**ມາດຕາ 35 ມາດຕະການທາງວິໄນ**

ພະນັກງານຄຸ້ມຄອງ ແລະ ກວດກາ ທີ່ລະເມີດຂໍ້ຫ້າມໃນຂໍ້ຕົກລົງສະບັບນີ້ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ແລະ ກໍ່ຄວາມເສຍຫາຍເລັກໜ້ອຍ ທີ່ມີມູນຄ່າຕໍ່າກວ່າ 500,000 ກີບ ແຕ່ບໍ່ມີຄວາມຈິງໃຈລາຍງານ, ຫຼົບຫຼີກຈາກຄວາມຜິດ ຈະຖືກລົງວິໄນຕາມແຕ່ລະກໍລະນີ ດັ່ງນີ້:

1. ຕຳນິ, ກ່າວເຕືອນຄວາມຜິດຕາມ ພ້ອມທັງບັນທຶກໄວ້ໃນສຳນວນເອກະສານຊີວະປະຫວັດຂອງຜູ້ກ່ຽວ;
2. ໂຈະການເລື່ອນຊັ້ນ, ຂັ້ນເງິນເດືອນ ແລະ ການຍ້ອງຍໍ;
3. ປົກຕຳແໜ່ງ ຫຼື ຍົກຍ້າຍໄປຮັບໜ້າທີ່ອື່ນ ທີ່ມີຕຳແໜ່ງຕໍ່າກວ່າເກົ່າ;
4. ໃຫ້ອອກຈາກລັດຖະກອນ ໂດຍບໍ່ໄດ້ຮັບນະໂຍບາຍໃດໆ.

ຜູ້ຖືກລົງວິໄນ ຕ້ອງສົ່ງຊັບສິນທີ່ຕົນໄດ້ມາຢ່າງບໍ່ຖືກຕ້ອງນັ້ນ ຄືນໃຫ້ການຈັດຕັ້ງຢ່າງຄົບຖ້ວນ.

**ມາດຕາ 36 ມາດຕະການປັບໃໝ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກປັບໃໝ ດັ່ງນີ້:

1. ລະເມີດຂໍ້ຕົກລົງສະບັບນີ້ ໂດຍເຈດຕະນາ ຫຼື ດ້ອຍຄວາມບໍ່ລະມັດລະວັງເປັນຄັ້ງທີສອງ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ຈະຖືກປັບໃໝ 2,000,000 ກີບ;
2. ລະເມີດຂໍ້ຕົກລົງສະບັບນີ້ ເປັນຄັ້ງທີສອງ ໂດຍເຈດຕະນາ ຫຼື ເປັນການອາຈິນ ຈະຖືກປັບໃໝ 10,000,000 ກີບ ໃນການລະເມີດແຕ່ລະຄັ້ງ;
3. ດຳເນີນທຸລະກິດດ້ານທຸລະກຳການຄ້າທາງເອເລັກໂຕຣນິກ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ 10,000,000 ກີບ;
4. ນຳໃບອະນຸຍາດໃຫ້ຜູ້ອື່ນນຳໃຊ້, ເຊົ່າ ຫຼື ໂອນ ຈະຖືກປັບໃໝ 5,000,000 ກີບ;
5. ໃຫ້ບໍລິການນອກເໜືອຈາກປະເພດການບໍລິການທີ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ 5,000,000 ກີບ;
6. ປອມແປງ, ສະໜອງຂໍ້ມູນທີ່ບໍ່ຖືກຕ້ອງ, ບິດເບືອນ, ປົກປິດ, ເຊື່ອງອຳ ຫຼື ບໍ່ໃຫ້ຄວາມຮ່ວມມື ກັບອົງການຄຸ້ມຄອງ ແລະ ກວດກາ ຈະຖືກປັບໃໝ 5,000,000 ກີບ;
7. ໂຄສະນາໃສ່ຮ້າຍປ້າຍສີ ຫຼື ສ້າງຄວາມເສຍຫາຍໃຫ້ຜູ້ບໍລິການອື່ນ ຈະຖືກປັບໃໝ 5,000,000 ກີບ;
8. ບໍ່ຕໍ່ໃບອະນຸຍາດພາຍໃນ 30 ວັນ ຫຼັງຈາກໝົດກຳນົດນຳໃຊ້ແລ້ວ ຈະຖືກປັບໃໝ 500,000 ກີບ;
9. ບໍ່ຕໍ່ໃບອະນຸຍາດພາຍຫຼັງໝົດກຳນົດນຳໃຊ້ 30 ວັນ ຈະຖືກປັບໃໝ 1,000,000 ກີບ.

**ມາດຕາ 37 ມາດຕະການທາງແພ່ງ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຊຶ່ງໄດ້ກໍ່ຄວາມເສຍຫາຍແກ່ຜູ້ອື່ນ ຈະໄດ້ໃຊ້ແທນຄ່າເສຍຫາຍຕາມທີ່ຕົນໄດ້ກໍ່ຂຶ້ນ.

**ມາດຕາ 38 ມາດຕະການທາງອາຍາ**

ບຸກຄົນ ທີ່ໄດ້ລະເມີດຂໍ້ຕົກລົງສະບັບນີ້ ຊຶ່ງເປັນການກະທຳຜິດທາງອາຍາ ເຊັ່ນ: ປອມແປງ, ທຳລາຍເອກະສານ, ສໍ້ໂກງ, ສວຍໃຊ້ໜ້າທີ່ຕຳແໜ່ງ, ໃຊ້ອຳນາດເກີນຂອບເຂດ, ຕົວະຍົວະ, ຫຼອກລວງ, ລະເມີດຊັບສິນທາງປັນຍາ, ລ່ວງລະເມີດຄວາມລັບສ່ວນຕົວ, ລະເມີດລະບຽບກ່ຽວກັບລະບອບພາສີ, ອາກອນ, ການຂົນສົ່ງ, ການນຳເຂົ້າ, ການສົ່ງອອກ, ການຂາຍ ແລະ ການແລກປ່ຽນສິນຄ້າ ຫຼື ຜະລິດຕະພັນ ປອມ, ຖືກຄວບຄຸມ, ເກືອດຫ້າມ, ເປັນອັນຕະລາຍ ຫຼື ບໍ່ຖືກຕ້ອງຕາມກົດໝາຍ ກ່ຽວກັບທຸລະກຳການຄ້າທາງເອເລັກໂຕຣນິກ ຈະຖືກລົງໂທດຕາມທີ່ໄດ້ກຳນົດໄວ້ໃນກົດໝາຍອາຍາ ຫຼື ກົດໝາຍອື່ນກ່ຽວຂ້ອງທີ່ໄດ້ກຳນົດໂທດທາງອາຍາຕາມກໍລະນີເບົາ ຫຼື ໜັກ.

## ໝວດທີ 8
## ບົດບັນຍັດສຸດທ້າຍ

**ມາດຕາ 39 ການຈັດຕັ້ງປະຕິບັດ**

ມອບໃຫ້ ກົມເຕັກໂນໂລຊີດິຈິຕອນ ແລະ ພະແນກວິທະຍາສາດ ແລະ ເຕັກໂນໂລຊີ ແຂວງ, ນະຄອນ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 40 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ໄດ້ລົງລາຍເຊັນ ແລະ ພາຍຫຼັງທີ່ໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

**ລັດຖະມົນຕີ**
**ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ**